# ວິທີການລະໝາດຕາມແບບຢ່າງຂອງທ່ານນະບີ ﷺ

# ພ້ອມການອາບນ້ຳລະໝາດ

## كيفية صلاة النبي ﷺ مع كيفية الوضوء

(با للغة لاوسي)

ຂຽນໂດຍ: ອັບດຸລອະຊີຊ ບິນ ອັບດຸລລໍຫ໌ ບິນ ບາສ

**ຖອດຄວາມໂດຍ:** ມູຫັມມັດນູຣ ຊໍແລະຫ໌

**ກວດສອບໂດຍ:** ອານັດ ບິນຊໍແລະຫ໌

1441-2020

# ຄຳນຳ

ການສັນລະເສີນສະດຸດີທັ້ງຫຼາຍເປັນສິດແດ່ອັລລໍຫ໌ພຣະອົງດຽວເທົ່ານັ້ນ ບໍ່ມີພຣະເຈົ້າອື່ນໃດນອກຈາກອັລລໍຫ໌ ຜູ້ສ້າງສ້າງແລະບັງດານທຸກສິ່ງຕາມຄວາມພຣະປະສົງຂອງພຣະອົງ ໃນນາມຂະນະຜູ້ແປມີຄວາມສຸກດີໃຈຫຼາຍທີ່ໄດ້ໂອກາດແປ ໜັງສືວິທີການລະຫມາດຕາມແບບຢ່າງຂອງທ່ານນະບີ ﷺ ພ້ອມການອາບນ້ຳລະຫມາດ

ໃນການແປໜັງສືຄັ້ງນີ້ມີຈຸດປະສົງທີ່ຢາກຈະໃຫ້ພີ່ນ້ອງມຸສລິມສາມາດເຂົ້າໃຈແລະແນວທາງການລະຫມາດທີ່ຖືກຕ້ອງຕາບແບບຢ່າງຂອງທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ ເພື່ອທີ່ຈະເຮັດໃຫ້ການງານທີ່ເຮົາປະຕິບັດຖືກຕອບຮັບຈາກພຣະເຈົ້າເອກອົງອັລລໍຫ໌ ເພາະທ່ານນະບີ ເຄີຍກ່າວໄວ້ວ່າ “ຜູ້ໄດ້ທີ່ປະຕິບັດອື່ນນອກຈາກພວກເຮົາ ເຂົາບໍ່ແມ່ນພວກຂອງເຮົາ”

ສຸດທ້າຍນີ້ ຜູ້ແປມີຄວາມຫວັງຢ່າງຍິ່ງວ່າ ໜັງສືເລັ່ມນີ້ຈະເປັນປະໂຫຍດຫຼາຍ ແລະສາມາດເຮັດໃຫ້ພີ່ນ້ອງທີ່ໄດ້ອ່ານ ເຂົ້າໃຈຫຼັກປະຕິບັດຄຳສັ່ງສອນໃນການລະຫມາດໄດ້ຫຼາຍຂຶ້ນ

ມວນການສັນລະເສີນເປັນເອກະສິດຂອງອັລລໍຫ໌ພຽງພະອົງດຽວເທົ່ານັ້ນ ຂໍວິງວອນຕໍ່ພຣະອົງ ສົງໂປດປະທານຄວາມສັນຕິຄວາມຈຳເລີນແດ່ທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ ເຊິ່ງເປັນບ່າວຂອງພຣະອົງແລະເປັນສາສະທູດຂອງພະອົງ ແລະຂໍຄວາມສັນຕິຈົ່ງມີແດ່ຄອບຄົວແລະບັນດາສະຫາຍຂອງທ່ານດ້ວຍ ຕະຫຼອດຈົນຜູ້ຈະເລີນຮ້ອຍຕາມແບບຢ່າງຂອງທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ

ຂະນະຜູ້ຈັດທຳ

18/03/2020

# ສາລະບັນ

ຫົວຂໍ້ ເລກໜ້າ

1. ການອາບນ້ຳລະຫມາດໃຫ້ສົມບູນ ... 1
2. ໃຫ້ຜູ້ລະຫມາດຫັນໜ້າໄປທາງກິບລັດ ... 3
3. ຕັກບີຣຣໍຕຸລອິຫ໌ຣອມ ... 4
4. ຍົກມືທັ້ງສອງຂ້າງຂະນະຕັກບີຣ ... 4
5. ວາງມືທັ້ງສອງຂ້າງບົນໜ້າອົກ ... 4
6. ສຸນັດໃຫ້ອ່ານດຸອາ ອັລ-ອິຟຕິຟຕະຫ໌ ... 4
7. ກົ້ມຣູກົວະ ພ້ອມກ່າວຕັກບີຣ ... 6
8. ເງີຍຫົວຂຶ້ນຈາກການຣູກົວະ ... 6
9. ລົງສຸຍູດພ້ອມກ່າວຕັກບີຣ ... 8
10. ຍົກຫົວຂຶ້ນພ້ອມກ່າວຕັກບີຣ ... 9
11. ການຄັ້ງສຸດທ້າຍ ... 10
12. ຍົກຫົວຂຶ້ນຈາກການສຸຍູດພ້ອມກ່າວຕັກບີຣ ... 10
13. ກໍລະນີລະຫມາດສອງຣໍກະອັດ ... 10
14. ກໍລະໜີລະຫມາດສາມຫຼື ສີ່ຣໍກະອັດ ... 13
    - ☪ ສິ່ງທີ່ສຸນັດ(ສົ່ງເສີມ)ໃຫ້ກ່າວຫຼັງລະຫມາດ ... 13
    - ☪ ອິມາມຈະກ່າວດຸອານີ້ ກ່ອນທີ່ຈະຫັນໜ້າໄປທາງມະຫ໌ມູມ ... 14

☪ ການກ່າວຕັສບີຫ໌ຫຼັງລະຫມາດ........................................... 15

☪ ລະຫມາດສຸນັດ ອັຣ-ຣໍວາຕິບ ............................................ 17

بسم الله الرحمن الحيم

الحمد لله وحده، والصلاة والسلام على نبينا محمد وعلى آله وصحبه، أمابعد،،،

ມວນການສັນລະເສີນເປັນເອກະສິດຂອງອັລລໍຫ໌ພຽງພະອົງດຽວເທົ່ານັ້ນ ຂໍວິງວອນຕໍ່ພຣະອົງ ສິງໂປດປະທານຄວາມສັນຕິຄວາມຈຳເລີນແດ່ທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ ເຊິ່ງເປັນບ່າວຂອງພຣະອົງແລະເປັນສາສະທູດຂອງພະອົງ ແລະຂໍຄວາມສັນຕິຈົ່ງມີແດ່ຄອບຄົວແລະບັນດາສະຫາຍຂອງທ່ານດ້ວຍ

ນີ່ຄືການອະທິບາຍສັ້ນໆ ກ່ຽວກັບການລະຫມາດຕາມແບບຢ່າງຂອງທ່ານ ນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ ທີ່ຂ້ອຍຂໍນຳສະເໜີແດ່ພີ່ນ້ອງມຸສລິມມີນ ແລະ ມຸສລິມະຫ໌ ເພື່ອໃຫ້ທຸກຄົນທີ່ໄດ້ອ່ານຈະໄດ້ຮັບຄວາມຮູ້ແລະເຂົ້າໃຈຫຼັກປະຕິບັດ ທີ່ຖືກຕ້ອງຕາມແບບຢ່າງຂອງທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ ດັ່ງທີ່ທ່ານ ນະບີ ໄດ້ກ່າວໄວ້ວ່າ:

{{ صلوا كما رأيتموني أصلي }}

**ຄວາມໝາຍວ່າ:** "ທ່ານທັ້ງຫຼາຍຈົ່ງລະຫມາດປຽບດັ່ງທີ່ທ່ານເຫັນຂ້ອຍລະຫມາດ"

**ລາຍງານໂດຍ ອັລ-ບຸກໍຣີ**

### 1. ການອາບນ້ຳລະໝາດໃຫ້ສົມບູນ

ກ່າວຄື ການອາບນ້ຳລະຫມາດໂດຍປະຕິບັດຕາມໂອການຂອງອັລລໍຫ ທີ່ພະອົງ ໄດ້ກ່າວໄວ້ວ່າ

﴿ يَأَيُّهَا الَّذِينَ ءَامَنُوٓاْ إِذَا قُمْتُمْ إِلَى ٱلصَّلَوٰةِ فَٱغْسِلُواْ وُجُوهَكُمْ وَأَيْدِيَكُمْ إِلَى ٱلْمَرَافِقِ وَٱمْسَحُواْ بِرُءُوسِكُمْ وَأَرْجُلَكُمْ إِلَى ٱلْكَعْبَيْنِۚ ﴾ (سورة المائدة : ٦)

**ຄວາມໝາຍ:** ໂອ້ ບັນດາຜູ້ສັດທາທັ້ງຫຼາຍ ເມື່ອເຈົ້າປະຕິບັດການລະຫມາດ ກໍ່ຈົ່ງລ້າງໜ້າຂອງເຈົ້າແລະມືຂອງພວກເຈົ້າຈົນຮອດຂໍ້ສອກ ຈົ່ງລູບຫົວ ແລະ ຈົ່ງລ້າງຕີນຂອງພວກເຈົ້າຈົນຮອດຕາຈຸ່ມທັ້ງສອງ (ສູເຣາະຫມາອິດະຫ: 6)

ທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ ໄດ້ກ່າວໄວ້ວ່າ:

{{ لا تقبل صلاة بغير طهور }}

**ຄວາມໝາຍວ່າ:** "ການລະຫມາດທີ່ປາດສະຈາກຄວາມສະອາດ (ການອາບນ້ຳລະຫມາດ) ຈະບໍ່ຖືກຕອບຮັບ"

- **ການອາບນ້ຳລະໝາດ ມີດັ່ງນີ້**

1. ນຽດ ຫຼື ຈົ້ງເຈດຕະນາວ່າຈະອາບນ້ຳລະຫມາດ ໂດຍບໍ່ໄດ້ເວົ້າອອກມາ ເພາະທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ ບໍ່ເຄີຍເວົ້າໃນສິ່ງທີ່ນຽດ ຫຼື ຕັ້ງໃຈອອກມາເປັນຄຳເວົ້າທັ້ງໃນການອາບນ້ຳລະຫມາດ ການລະຫມາດ ແລະການປະຕິບັດສາສະນະກິດອື່ນໆ ເພາະວ່າອັລລໍຫສິງຮັບຮູ້ກ່ຽວກັບສິ່ງທີ່ຢູ່ໃນໃຈ ດັ່ງນັ້ນຈຶ່ງບໍ່ຈຳເປັນທີ່ຈະບອກອັລລໍຫດ້ວຍຄຳເວົ້າວາຈາກ່ຽວກັບສິ່ງທີ່ຢູ່ໃນໃຈ
2. ການກ່າວພຣະນາມຂອງອັລລໍຫ໌ (ບິສມິລລາຫ໌)
3. ລ້າງມືທັ້ງສອງຂ້າງ **ສາມ** ຄັ້ງ
4. ບ້ວນປາກແລະສູດນ້ຳເຂົ້າຫຸດັງ **ສາມ** ຄັ້ງ ໂດຍໃຊ້ມືຊ້າຍເວລາສັ່ງນ້ຳອອກຈາກຫຸດັງ
5. ລ້າງໃບໜ້າໃຫ້ທົ່ວ **ສາມ** ຄັ້ງ ເລີ່ມຈາກຂອບຫູຂວາຈົນຮອດຂອບຫູຊ້າຍໃຫ້ທົ່ວ ແລະ ເລີ່ມຈາກເສັ້ນຜົມໜ້າຜາກລົງມາ
6. ລ້າງແຂນ **ສາມ** ຄັ້ງ ຈາກປາຍນີ້ວມືຮອດຂໍ້ສອກ ເລີ່ມແຂນຂ້າງຂວາກ່ອນ ແລະ ຈຶ່ງລ້າງແຂນຂ້າງຊ້າຍ
7. ລູບຫົວ **ໜຶ່ງ** ຄັ້ງ ລູບດ້ວຍມືທີ່ປຽກນ້ຳ ໃຫ້ທົ່ວຜົມທັ້ງໝົດ
8. ລູບໃບຫູສອງຂ້າງ **ໜຶ່ງ** ຄັ້ງ
9. ລ້າງຕີນທັ້ງສອງຂ້າງ **ສາມ** ຄັ້ງ ຕັ້ງແຕ່ປາຍນີ້ວຕີນຮອດຕາຕຸ່ມຂໍ້ສອກ ເລີ່ມຕີນຂ້າງຂວາກ່ອນ ແລະຈຶ່ງລ້າງຕີນຂ້າງຊ້າຍ

ແລະທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ ກ່າວໄວ້ວ່າ:

(( ما منكم من أحد يتوضأ فيسبغ الوضوء ثم يقول: "أَشْهَدُ أَنْ لاَ إِلَهَ إِلاَّ اللَّهُ وَحْدَهُ لاَ شَرِيْكَ لَهُ، وَ أَشْهَدُ أَنَّ مُحَمَّدًا عَبْدُهُ وَرَسُوْلُهُ" ،، إلا فتحت له أبواب الجنة الثمانيةيدخل من أيها شاء.. (رواه مسلم)

**ຄວາມໝາຍວ່າ:** ບໍ່ມີການຕອບແທນໃດສຳລັບບຸກຄົນໃດໃນໝູ່ພວກເຈົ້າທີ່ອາບນ້ຳລະຫມາດ ເຊິ່ງລາວໄດ້ກ່າວຫຼັງຈາກເສັດສິ້ນຈາກການອາບນ້ຳລະຫມາດວ່າ

"أَشْهَدُ أَنْ لاَ إِلَهَ إِلاَّ اللَّهُ وَحْدَهُ لاَ شَرِيْكَ لَهُ، وَ أَشْهَدُ أَنَّ مُحَمَّدًا عَبْدُهُ وَرَسُوْلُه"

**ຄວາມໝາຍວ່າ:** "ຂ້າພະເຈົ້າຂໍປະຕິຍານວ່າບໍ່ມີພຣະເຈົ້າອື່ນໃດນອກຈາກອັລລໍຫ໌ ພຽງອັລລໍຫ໌ອົງດຽວ ບໍ່ມີການພັກດີໃດໆອື່ນນອກຈາກອັລລໍຫ໌ ແລະຂ້າພະເຈົ້າຂໍປະຕິຍານວ່າມຸຫັມມັດ ຊັລລັລລໍຫຸ ອະລັຍຮິ ວະສັລລັມ ເປັນບ່າວ ແລະເປັນສາສະດາທູດຂອງພຣະອົງ" ນອກຈາກວ່າ ບັນດາປະຕູໃນສວນສະຫວັນທັ້ງແປດຈະຖືກເປີດສຳຫຼັບລາວ ໂດຍທີ່ລາວສາມາດເຂົ້າໄປທາງປະຕູໃດກໍ່ໃດຕາມທີ່ລາວຕ້ອງການ" (ລາຍງານໂດຍມຸສລິມ)

### 2. ໃຫ້ຜູ້ລະຫມາດຫັນໜ້າໄປທາງກິບລັດ

ກ່າວຄື ຫັນໜ້າແລະຮ່າງກາຍທັ້ງໝົດໄປທາງທິດກະບະຫ໌ ເຊິ່ງຕັ້ງຢູ່ທີ່ນະຄອນມັກກະຫ໌ ປະເທດຊາອຸດີ ອາຣັບເບັຍ ດ້ວຍຄວາມຈັ້ງເຈດຈະນາວ່າຈະເຣັດການລະຫມາດຕາມທີ່ໄດ້ຕັ້ງໃຈເອົາໄວ້ ບໍ່ວ່າຈະເປັນການລະຫມາດຟັຣດູ(ພາກບັງຄັບ) ຫຼື ສຸນັດ (ພາກສົ່ງເສີມ) ແລະ ບໍ່ຕ້ອງເວົ້າວາຈາອອກມາຈາກສິ່ງທີ່ຕັ້ງໃຈໄວ້ ເພາະວ່າການເວົ້າວາຈາເປັນສຽງອອກມານັ້ນມີບິດບັນຍັດໄວ້ວ່າເປັນ "ບິດອະຫ໌" ຄືການເຣັດສິ່ງອື່ນຈາກສິ່ງທີ່ທ່ານນະບີບໍ່ປະຕິບັດ" ແລະທ່ານນະບີເອງກໍ່ບໍ່ເຄີຍກ່າວບຽດຫຼືສິ່ງທີ່ຕັ້ງໃຈອອກມາເປັນວາຈາ ບັນດາສໍຫາບະຫ໌(ສະຫາຍ)ຂອງທ່ານນະບີກໍ່ຄືກັນ

ການຫັນໜ້າໄປທາງກິບລັດເປັນເງື່ອນໄຂໃນການລະຫມາດແຕ່ມີກໍລະໜີທີ່ຍົກເວັ້ນ ເຊິ່ງຖືກຂຽນໄວ້ຢ່າງຊັດເຈນໃນຕຳລາຂອງນັກວິຊາການອິສລາມ (ເຊັ່ນ ການປະຕິບັດລະຫມາດໃນຍາມທີ່ຢ້ານ ຫຼື ສົງຄາມ ແລະການປະຕິບັດລະຫມາດຂະນະທີ່

ເດີນທາງແລະເຮົາບໍ່ຮູ້ທິດຕະເວັນຕົກຢ່າງແນ່ນອນ ກໍ່ສາມາດເຮັດການລະໝາດຫັນໜ້າໄປທາງທີ່ເຮົາສະດວກໄດ້)

### 3. ຕັກບີຣເຣາະຫຼຸລອິຫ໌ຣອມ

ກ່າວຕັກບີຣພ້ອມສາຍຕາທີ່ເບິ່ງໄປບ່ອນສຸຢູດ(ກົມ) ດ້ວຍຄຳກ່າວວ່າ **"ອັລລໍຫຸ ອັກບັຣ"** ມີຄວາມໝາຍວ່າ "ອັລລໍຫ໌ຍິ່ງໃຫຍ່"

### 4. ຍົກມືທັ້ງສອງຂ້າງຂະນະຕັກບີຣ

ກ່າວຄື ຍົກມືທັ້ງສອງຂ້າງຂະນະກ່າວຕັກບີຣ ໃຫ້ສູງລະດັບແຂນໄລ່ ຫຼື ຕິ່ງຫູ ດ້ວຍການແບ່ນິ້ວມືທັ້ງໝົດອອກ ແລະຫັນຝ່າມືໄປທາງກິບລັດ

### 5. ວາງມືທັ້ງສອງຂ້າງບົນໜ້າອົກ

ໃຫ້ວາງຝ່າມືຂວາທັບບົນມືຊ້າຍ ຫຼືບ່ອນຂໍ້ມືຊ້າຍ ຫຼືວາງບ່ອນຊ່ວງແຂນຂະນະທີ່ຢືນລະໝາດ ເພາະມີລາຍງານຈາກທ່ານນະບີ ຊໍລລັລລໍຫຸ ອະລັຍຮິ ວະສັລລັມ

### 6. ສຸນັດໃຫ້ອ່ານດຸອາ ອັລ-ອິຟຕິຟຕາຫ

اللّٰهُمَّ بَاعِدْ بَيْنِي وَبَيْنَ خَطَايَ كَمَا بَاعَدْتَّ بَيْنَ الْمَشْرِقِ وَالْمغرِبِ، اللّٰهُمَّ نَقِّنِيْ مِنْ خَطَايَ كَمَا يُنَقَّى الثَّوْبُ الأَبْيَضُ مِنَ الدَّنَسِ، اللّٰهُمَّ اغْسِلْنِيْ مِنْ خَطَايَ بِالْمَاءِ وَالثَّلْجِ وَالْبَرَدِ. (رواه البخاري)

**ຄວາມໝາຍວ່າ:** ໂອ້ອັລລໍຫ໌ ຂໍສິງແຍກບ່າວໃຫ້ຫ່າງໄກຈາກຄວາມຜິດປຽບດັ່ງທີ່ພຣະອົງໄດ້ແຍກທິດຕະເວັນອອກກັບທິດຕະເວັນຕົກ ໂອ້ອັລລໍຫ໌ ຂໍພຣະອົງຊຳລະບ່າວໃຫ້ບໍລິສຸດຈາກບາບ ດັ່ງຜ້າຂາວສະອາດຖືກຊຳລະຈາກສິ່ງສົກກະປົກ ໂອ້ອັລລໍຫ໌ ໂປດລ້າງບ່າວຈາກຄວາມຜິດທັ້ງຫຼາຍດ້ວຍນ້ຳ ດ້ວຍຫິມະ ແລະນ້ຳລູກເຫັບ

(ລາຍງານໂດຍ ອັລ-ບຸກໍຣີ)

ຫຼືຖ້າຕ້ອງການທີ່ຈະກ່າວອີກແບບໜຶ່ງແທນກໍ່ໄດ້ ກໍ່ຈົ່ງກ່າວວ່າ:

{ سُبْحَانَكَ اللّٰهُمَّ وَبِحَمْدِكَ وَتَبَارَكَ اسْمُكَ وَتَعَالٰى جَدُّكَ وَلاَإِلَهَ غَيْرُكَ }

**ຄວາມໝາຍວ່າ:** ມະຫາບໍລິສຸດແດ່ອັລລໍຫ໌ພະຜູ້ອະພິບານແຫ່ງເຮົາ ການສັນລະເສີນມີແດ່ພະອົງ ຄວາມປະເສີດມີໃນພະນາມຂອງພຣະອົງ ກຽດແຫ່ງພຣະອົງຊ່າງສູງສົ່ງ ແລະ ບໍ່ມີພຣະເຈົ້າອື່ນໃດນອກຈາກພຣະອົງ

ເມື່ອຜູ້ທີ່ປະຕິບັດການລະຫມາດອ່ານດຸອາ ອັລ-ອິສຕິຟຕະຫ໌ ທີ່ມີສາຍງານຈາກທ່ານນະບີ ຊັລລັລລໍຫຸ ອະລັຍຮີ ວະສັລລັມ ນອກຈາກສອງບົດດັ່ງທີ່ກ່າວມາຂ້າງຕົ້ນ ກໍ່ຖືວ່າເປັນທີ່ອະນຸຍາດ ແລະຈະເປັນການດີຫຼາຍຫາກອ່ານດຸອາ ອັລ-ອິສຕິຟຕະຫ໌ ທີ່ບໍ່ຊ້ຳກັນ(ໃນແຕ່ລະຄັ້ງເວລາລະຫມາດ) ເພາະເປັນການປະຕິບັດຕາມສຸນນະຫ໌ຢ່າງສົມບູນ ຈາກນັ້ນໃຫ້ອ່ານຫຼັງຈາກດຸອາ ອັລ-ອິສຕິຟຕະຫ໌ ວ່າ

[ أَعُوْذُ بِاللهِ مِنَ الشَّيْطَانِ الرَّجِيْمِ ]

[ بِسْمِ اللهِ الرَّحْمٰنِ الرَّحِيْمِ ]

**ຄວາມໝາຍວ່າ:** ຂ້ອຍຂໍໃຫ້ຫຼີກພົ້ນດ້ວຍອັລລໍຫ໌ເພື່ອໃຫ້ຫ່າງໄກຈາກຊັຍຕອນຜູ້ຖືກສາບແຊ່ງ, ດ້ວຍພະນາມຂອງອັລລໍຫ ຜູ້ສົງກະລຸນາປານີຜູ້ສົງເມດຕາສະເໝີ

ແລ້ວອ່ານສູເຣາະຫ໌ ອັລ-ຟາຕິຫະຫ໌ ເພາະຈາກຄຳເວົ້າຂອງທ່ານນະບີ ຊັລລັລລໍຫຸ ອະລັຍຮີ ວະສັລລັມທີ່ເວົ້າໄວ້ວ່າ

{ لاصلاة لمن لم يقرأ بفاتحة الكتاب }

**ຄວາມໝາຍວ່າ:** ການລະຫມາດຈະບໍ່ຖືກຕອບຮັບ ສຳລັບຜູ້ໃດທີ່ບໍ່ໄດ້ອ່ານສູເຣາະຫ ອັລ-ຟາຕິຫະຫ໌ (ລາຍງານໂດຍ ອັລ-ບຸກໍຣີ)

ຫຼັງຈາກອ່ານສູເຣາະຫ ອັລ-ຟາຕິຫະຫ ເສັດແລ້ວກໍ່ຈິງກ່າວວ່າ: **“ອາມີນ”**

ເຊິ່ງມີຄວາມໝາຍວ່າ: “ຂໍພະອົງອັລລໍຫສົງຕອບຮັບນຳເດ່ທ່ອນ” ອ່ານສຽງດັງໃນການລະຫມາດທີ່ອ່ານສຽງດັງ (ຄື ມັກຣິບ, ອິຊາ, ແລະຊຸບຮີ) ແລະອ່ານ

ດ້ວຍສຽງຄ່ອຍໃນການລະຫມາດທີ່ອ່ານບໍ່ສຽງດັງ (ຄື ຊຸຫ໌ຣິ, ແລະ ອັສຣິ) ແລະອ່ານຄາມດ້ວຍອາຍະຫອັລກຸຣອານທີ່ທ່ານສະດວກຈະອ່ານ

ຈະເປັນສິ່ງທີ່ດີສຸດຖ້າຫາກອ່ານສູເຣາະຫ໌ທີ່ມີຄວາມຍາວປານກາງ (ເອົາສັດ ອັລ-ມຸຟັສສອລ) ໃນການລະຫມາດຊຸບຮີ (ຕອນເຊົ້າ) ແລະອ່ານສູເຣາະຫ໌ທີ່ຍາວແລະສັ່ນ(ກິສອສ ອັລ-ມູຟັສສອລ) ໃນບາງຄັ້ງໃນການລະຫມາດມັກຣິບ ນັ້ນຄືການປະຕິບັດຕາມຫະດິຊທີ່ມີສາຍລາຍງານຈາກທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ

### 7. ກົ້ມຣູກົວະ ພ້ອມກ່າວຕັກບີຣ

ຍົກມືທັ້ງສອງຂ້າງໃຫ້ຢູ່ໃນລະດັບຫົວໄລຫຼືຕິ່ງຫູ ພ້ອມກ່າວຕັກບີຣເມື່ອກົ້ມຣູກົວະ ໃຫ້ຫົວຕັ້ງກົງກັບແຜ່ນຫຼັງ ແລະວາງມືທັ້ງສອງຂ້າງເຖິງຫົວເຂົ່າໂດຍນິ້ວມືແຍກອອກຈາກກັນ ໃຫ້ມີຕຸມະນີນະຫ (ສະມາທິຫຼືການເວັ້ນຊ່ວງໃຫ້ດົນພໍປະມານ) ໃນການຣູກົວະ ແລະກ່າວວ່າ:

{ سُبْحَانَ رَبِّيَ الْعَظِيْمِ }

**ຄວາມໝາຍວ່າ:** ມະຫາບໍລິສຸດ ພຣະຜູ້ອະພິບານຂອງຂ້ອຍ ຜູ້ສິງຍິ່ງໃຫຍ່

ຈະເປັນການດີຖ້າຫາກອ່ານສາມຄັ້ງ ຫຼືຫຼາຍກວ່ານັ້ນ ແລະສຸນັດໃຫ້ກ່າວພ້ອມດຸອາດັ່ງນີ້ ຄື:

{ سُبْحَانَكَ اللّٰهُمَّ رَبَّنَا وَبِحَمْدِكَ، اللّٰهُمَّ اغْفِرْ لِيْ }

**ຄວາມໝາຍວ່າ:** ມະຫາບໍລິສຸດແດ່ພຣະອົງ ໂອ້ອັລລໍຫ໌ພຣະຜູ້ອະພິບານຂອງພວກເຮົາ ແລະດ້ວຍການສັນລະເສີນແດ່ພະອົງ ໂອ້ອັລລໍຫ໌ໂປດປະທານອະໄພຍະໂທດແກ່ຂ້ອຍນຳເດ່

### 8. ເງີຍຫົວຂຶ້ນຈາກການຣູກົວະ

ໃຫ້ຍົກມືທັ້ງສອງຂ້າງໃຫ້ຍົກມືທັ້ງສອງຂ້າງໃຫ້ຢູ່ໃນລະດັບຫົວໄລຫຼືຕິ່ງຫູພ້ອມກ່າວຕັກບີຣ ຂະນະເງີຍຫົວຂຶ້ນຈາກການຣູກົວະ ພ້ອມກ່າວວ່າ:

{ سَمِعَ اللهُ لِمَنْ حَمِدَهُ }

**ຄວາມໝາຍວ່າ:** ອັລລໍຫ໌ສິງໄດ້ຍິນ ສຳຫຼັບຜູ້ທີ່ສັນລະເສີນພຣະອົງ

ໃຫ້ກ່າວເມື່ອເປັນອິມາມນຳລະຫມາດ ຫຼືເມື່ອລະຫມາດຄົນດຽວ ຕອນຢືນກົງ ໃຫ້ກ່າວວ່າ:

{ رَبَّنَا وَلَكَ الحَمْدُ، حَمْدًا كَثِيْرًا طَيِّبًا مُبَارَكًا فِيْهِ، مِلْ ءَ السَّمَوَاتِ وَمِلْ ءَ الأَرْضِ وَمِلْ ءَ مَا بَيْنَهُمَا وَمِلْ ءَ مَا شِئْتَ مِنْ شَيْءٍ بَعْدُ }

**ຄວາມໝາຍວ່າ:** ໂອ້ພະຜູ້ອະພິບານແຫ່ງພວກເຮົາ ຂໍສັນລະເສີນແດ່ພຣະອົງ ດ້ວຍການສັນລະເສີນທີ່ລາກຫຼາຍ ທີ່ດີ ແລະປະເສີດ ໃຫ້ເຕັມທັ້ງຟາກຟ້າ ແຜ່ນດິນ ແລະສິ່ງທີ່ຢູ່ໃນລະວ່າງທັ້ງສອງ ແລະເຕັມທຸກສິ່ງທີ່ພຣະອົງປະສົງນອກເໜືອຈາກນັ້ນ

****ສຳຫຼັບມະມູມເຊິ່ງເປັນຜູ້ຕາມ ໃຫ້ກ່າວໃນຂະນະເງີຍໜ້າຂຶ້ນຈາກຣູກົວະດ້ວຍດຸອາຂ້າງຕົ້ນເຊັ່ນກັນ

ຖ້າຫາກຈະກ່າວເພີ່ມເຕີມທັ້ງຕອນເປັນອິມາມຫຼືລະຫມາດຄົນດຽວວ່າ:

{ أَهْلَ الثَّنَاءِ وَالْمَجْدِ، أَحَقُّ مَا قَالَ العَبْدُ، وَكُلُّنَا لَكَ عَبْدٌ اللَّهُمَّ لاَ مَنِعَ لِمَا أَعْطَيْتَ وَلاَ مُعْطِيَ لِمَا مَنَعْتَ وَلاَ يَنْفَعُ ذَا الْجَدَّ مِنْكَ الْجَدَّ }

**ຄວາມໝາຍວ່າ:** ພຣະອົງຜູ້ເປັນເຈົ້າຂອງການສັນລະເສີນແລະຄວາມຍິ່ງໃຫຍ່ ສິ່ງທີ່ບ່າວຄສນກ່າວຫຼາຍທີ່ສຸດ ເຊິ່ງພວກເຮົາທັ້ງຫຼາຍລ້ວນເປັນບ່າວຂອງພຣະອົງ ໂອ້ອັລລໍຫ໌ ພຣະຜູ້ອະພິບານແຫ່ງເຮົາ ບໍ່ມີຜູ້ໃດຫ້າມໄດ້ໃນສິ່ງທີ່ພຣະອົງສິງປະທານ ແລະບໍ່ມີຜູ້ໄດ້ໃຫ້ໄດ້ໃນສິ່ງທີ່ພຣະອົງສິງຫ້າມໄວ້ ແລະຄວາມລ່ຳລວຍອຳນາດຂອງຜູ້ໃດບໍ່ອາດອຳນວຍຜົນແກ່ຜູ້ຄົນນັ້ນຕໍ່ໜ້າພຣະອົງ (ຫຼືຈາກການລົງໂທດຂອງພະອົງ) ໄດ້

ການອ່ານດຸອາຂ້າງຕົ້ນຈະເປັນສິ່ງທີ່ດີຫຼາຍ ເນື່ອງຈາກວ່າມີລາຍງານຈາກທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ

ແລະສຸນັດໃຫ້ວາງມືທັ້ງສອງຂ້າງເຖິງໜ້າອົກ ໂດຍທີ່ມືຂວາທັບມືຊ້າຍຄື ທີ່ເຮັດໃນຂະນະຢືນກົງກ່ອນທີ່ຈະກົ້ມຣຸກົວະ ເພາະມີສາຍລາຍງານຈາກທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ ຈາກຫະດິຊ ວາອິລ ບິນ ຫະຈັຣ ແລະ ສະຫລ ບິນ ສະອັດ ຣໍດີຢັລລໍຫ ອັນຮຸມາ

## 9. ລົງສຸຢູດພ້ອມກ່າວຕັກບີຣ

ຫາກເປັນການສະດວກ ໃຫ້ເອົາຝ່າມືທັ້ງສອງລົງກ່ອນຫົວເຂົ່າ ແລະນິ້ວມື ແລະຕີນຍັນກັບພື້ນ ພ້ອມຫັນທັ້ງນິ້ວມືແລະນິ້ວຕີນໄປທາງກິບລັດ ໃນຂະນະສຸຢູດ ໃຫ້ຍຶດເອົາວ່າໃຫ້ອະໄວຍະວະທັ້ງເຈັດຕ້ອງໂດນພື້ນທີ່ຈະສຸຢູດ ຄື ໜ້າຜາກກັບຫູດັງ ຝ່າມືທັ້ງສອງຂ້າງ ຫົວເຂົ່າທັ້ງສອງຂ້າງ ແລະນິ້ວຕີນທັ້ງສອງຂ້າງ ໃຫ້ກ່າວຂະນະສຸຢູດ ວ່າ:

{{{ سُبْحَانَ رَبِّيَ الأَعْلَى }}}

**ຄວາມໝາຍວ່າ:** ມະຫາບໍລິສຸດແດ່ພະຜູ້ອະພິບານຜູ້ສິ່ງສູງສິ່ງຂອງຂ້ອຍ

ຈະເປັນການດີຖ້າຫາກອ່ານສາມຄັ້ງ ຫຼື ຫຼາຍກວ່ານັ້ນ ແລະສຸນັດໃຫ້ກ່າວ ພ້ອມດຸອາດັ່ງນີ້

{{ سُبْحَانَكَ اللَّهُمَّ رَبَّنَا وَبِحَمْدِكَ، اللَّهُمَّ اغْفِرْ لِي }}

**ຄວາມໝາຍວ່າ:** ມະຫາບໍລິສຸດແດ່ພະອົງ ໂອ້ອັລລໍຫພະຜູ້ອະພິບານຂອງພວກເຮົາ ແລະດ້ວຍການສັນລະເສີນແດ່ພະອົງ ໂອ້ອັລລໍຫໂປດປະທານອະໄພຍະໂທດແກ່ຂ້ອຍນຳເດີ

ຄວນມີການກ່າວດຸອານີ້ໃຫ້ຫຼາຍໆໃນຂະນະສຸຢູດ ເພາະຈາກຫະດິຊທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ ໄດ້ກ່າວວ່າ:

{ أما الركوع فعظموا فيه الرب، وأما السجود فاجتهدوا في الدعاء، فقمن أن يستجاب لكم }

**ຄວາມໝາຍວ່າ:** "ເມື່ອການກົ້ມຣູກົວະ ພວກທ່ານຈົ່ງກ່າວຍ້ອງຍໍເຖິງຄວາມຍິ່ງໃຫຍ່ຂອງອັລລໍຫ໌ ແລະ ເມື່ອສຸຢູດ ພວກທ່ານຈົ່ງພະຍາຍາມຂໍດຸອາໃຫ້ຫຼາຍໆ ເພາະນັ້ນຄືຊ່ວງທີ່ດີທີ່ສຸດຂອງການຂໍ ເພາະອັລລໍຫ໌ຈະຕອບຮັບຈາກພວກທ່ານ

ໃຫ້ຂໍແຕ່ຄວາມດີງາມທັ້ງໂລກນີ້ແລະໂລກໜ້າຈາກພຣະອົງອັລລໍຫ໌ ທັ້ງໃນການລະຫມາດຟັຣດູແລະລະຫມາດສຸນັດ

ໃນຂະນະສຸຢູດ ທ່ານຈົ່ງຢຶດແຂນໃຫ້ຫ່າງຈາກລຳຕົວ ໜ້າທອງ ແລະສະໂພກ ແລະໃຫ້ສະໂພກຫ່າງຫຼືແຍກອອກຈາກຂາ ພ້ອມກັບຍົກແຂນໃຫ້ຂຶ້ນເໜືອພື້ນ ດັ່ງຄຳກ່າວຂອງທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ:

{ اعتدلوا في السجود، ولا يبسط أحدكم ذراعيه انبساط الكلب }

**ຄວາມໝາຍວ່າ:** "ທ່ານຈົ່ງສຸຢູດໃຫ້ດີພໍປານກາງ(ບໍ່ນອນລາບແລະບໍ່ງໍໂຕ) ແລະຫ້າມບຸກຄົນໃດວາງແຂນຂອງລາວເຖິງພື້ນເຊັ່ນດັ່ງຫມາເຮັດ"

### 10. ຍົກຫົວຂຶ້ນພ້ອມກ່າວຕັກບີຣ

ເມື່ອລຸກຂຶ້ນຈາກສຸຢູດ ໃຫ້ນັ່ງເຖິງຕີນຊ້າຍທີ່ວາງພັບເຖິງພື້ນ ແລະໃຫ້ຕີນຂວາຍັນກັບພື້ນ ແລະນຳມືໄປວາງເຖິງຫົວເຂົ່າແລະຕົ້ນຂາທັ້ງສອງຂ້າງ ແລະໃຫ້ກ່າວ

{ رَبِّ اغْفِرْ لِيْ وَارْ حَمْنِيْ، وَاهْدِ نِيْ وَارْزُقْنِيْ وَعَافِنِيْ وَاجْبُرْنِيْ }

**ຄວາມໝາຍວ່າ:** ໂອ້ ອັລລໍຫ໌ ຂໍສິງໂປດໃຫ້ການອະໄພຍະໂທດແກ່ຂ້ອຍ ຂໍສິງໂປດເມດຕາຂ້ອຍ ຂໍສິງໃຫ້ການຊີ້ນຳແກ່ຂ້ອຍ ຂໍສິງໂປດປະທານປັດຈັຍຍັງຊີບແກ້ຂ້ອຍ ຂໍພຣະອົງໂປດຄຸ້ມຄອງຂ້ອຍ ແລະສິງປະທານຄວາມລ່ຳລວຍນຳເດ່

ແລະໃຫ້ມີ ຕຸມະນີນະຫ໌ (ສະມາທິຫຼືການເວັ້ນຊ່ວງໃຫ້ດົນພໍປະມານ)ໃນການນັ່ງ

### 11. ການຄັ້ງສຸດທ້າຍ

ໃຫ້ກ່າວຕັກບີຣຂະນະລົງສຸຢູດ ແລະປະຕິບັດໃຫ້ຄືກັບການສຸຢູດໃຫ້ຄັ້ງທຳອິດ

### 12. ຍົກຫົວຂຶ້ນຈາກການສຸຢູດພ້ອມກ່າວຕັກບີຣ

ເມື່ອຍົກຫົວຂຶ້ນຈາກສຸຢູດ ໃຫ້ນັ່ງນ້ອຍໜຶ່ງ ນັ່ງຄືກັບການນັ່ງລະວ່າງສອງສຸຢູດ ເຊິ່ງເອີ່ນວ່ານັ່ງພັກ ມັນຄືສຸນັດ ຖ້າຫາກບໍ່ປະຕິບັດເຊັ່ນນີ້ຖືວ່າບໍ່ໜ່າກຽດ ແລະບໍ່ມີການຊິກີຣຫຼືດຸອາໃດໆໃນຂະນະນັ່ງພັກ ເສັດແລ້ວໃຫ້ລຸກຂຶ້ນລະຫມາດສອງຣົກະອັດທີ່ສອງ ໃຫ້ມືຈັບທີ່ຫົວເຂົ່າຂະນະລຸກຂຶ້ນຢືນ ຫາກເປັນການສະດວກ ແຕ່ຖ້າຫາກລຳບາກກໍ່ໃຊ້ມືດັນທີ່ພື້ນ ເມື່ອຢືນກົງແລ້ວໃຫ້ອ່ານ ສູເຣາະຫ ອັລ-ຟາຕິຫະຫ໌ ແລະຕາມດ້ວຍອາຍະຫ໌ທີ່ສະດວກທີ່ຈະອ່ານ ໃຫ້ປະຕິບັດຄືກັບຣົກະອັດທຳອິດ

### 13. ກໍລະນີລະຫມາດສອງຣົກະອັດ

ການລະຫມາດທີ່ມີ 2 ຣົກະອັດ ເຊັ່ນ ລະຫມາດຊຸບຮິ ລະຫມາດວັນສຸກ ລະຫມາດວັນອີດ ວິທີນັ່ງຫຼັງຈາກລຸກຂຶ້ນຈາກການສຸຢູດຄັ້ງທີ່ສອງ ໃຫ້ນັ່ງເຖິງຕີນຊ້າຍທີ່ສຽບເຂົ້າໄປວາງໃຕ້ສະໂພກ ແລະໃຫ້ຕີນຂວາຍັນກັບພື້ນ ນຳມືຂວາໄປວາງເຖິງຕີນຂາຂວາ ພ້ອມກັບກຳນິ້ວມືທັ້ງໝົດ ຍົກເວັ້ນນິ້ວຊີ້ ແລະຊີ້ນິ້ວຊີ້ເພື່ອເປັນສັນຍະລັກແຫ່ງຄວາມເປັນເອກະພາບຂອງພະອົງອັລລໍຫ໌

ຈະເປັນການດີຫຼາຍ ຫາກກຳນິ້ວກ້ອຍແລະນິ້ວກາງ ແລະໃຫ້ຫົວແມ່ມືຕໍ່ເປັນວົງກັບນິ້ວກາງ ແລະຊີ້ດ້ວຍນິ້ວຊີ້ ເນື່ອງຈາກການນັ່ງທັ້ງສອງລັກສະນະລ້ວນເປັນການປະຕິບັດຂອງທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມທັ້ງນັ້ນ ດັ່ງນັ້ນຫາກປະຕິບັດທັ້ງສອງວິທີໂດຍບໍ່ຊ້ຳກັນ ຈະເປັນສິ່ງທີ່ດີຫຼາຍ ແລະໃຫ້ນຳມືຊ້າຍວາງເຖິງຕີນເຂົ່າຂ້າງຊ້າຍ

ໃນຂະນະນັ່ງໃຫ້ອ່ານຕະຊະຮຸດ ຄື:

{ التَّحِيَّاتُ لِلهِ وَالصَّلَوَاتُ وَالطَّيِّبَاتُ، اَلسَّلاَمُ عَلَيْكَ أَيُّهَا النَّبِيُّ وَرَحْمَةُ اللهِ وَبَرَكَاتُهُ، اَلسَّلاَمُ عَلَيْنَا وَعَلَى عِبَادِ اللهِ الصَّالِحِيْنَ، "أَشْهَدُ أَنْ لاَ إِلَهَ إِلاَّ اللَّهُ وَ أَشْهَدُ أَنَّ مُحَمَّدًا عَبْدُهُ وَرَسُوْلُه" }

**ຄວາມໝາຍວ່າ:** "ມວນການສະດຸດີ ການຂໍພອນ ແລະຄວາມດີທັ້ງຫຼາຍ ຂໍມີແດ່ພະອົງອັລລໍຫ໌ ໂອ້ທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ ຂໍຄວາມສັນຕິ ຄວາມປະເສີດ ຄວາມກະລຸນາປານີ ຈາກເອກອົງອັລລໍຫ໌ຈົ່ງມີແດ່ທ່ານ ຂໍຄວາມສັນຕິຈົ່ງມີແດ່ພວກເຮົາແລະບັນດາບ່າວຂອງພະອົງທີ່ຊໍແລະຫ໌(ຜູ້ມີຄຸນນະທຳ) "ຂ້າພະເຈົ້າຂໍປະຕິຍານວ່າບໍ່ມີພຣະເຈົ້າອື່ນໃດນອກຈາກອັລລໍຫ໌ ແລະຂ້າພະເຈົ້າຂໍປະຕິຍານວ່າມຸຫັມມັດ ຊັລລັລລໍຫຸ ອະລັຍຮິ ວະສັລລັມ ເປັນບ່າວແລະເປັນສາສະດາທູດຂອງພະອົງ"

ໃຫ້ກ່າວຫຼັງຈາກນັ້ນວ່າ:

{ اَللّٰهُمَّ صَلِّ عَلٰى مُحَمَّدٍ وَعَلَى آلِ مُحَمَّدٍ كَمَا صَلَّيْتَ عَلَى إِبْرَاهِيْمَ وَآلِ إِبْرَاهِيمَ إِنَّكَ حَمِيْدٌ مَّجِيْدٌ، وَبَارِكْ عَلٰى مُحَمَّدٍ وَعَلَى آلِ مُحَمَّدٍ كَمَا بَارَكْتَ عَلَى إِبْرَاهِيْمَ وَآلِ إِبْرَاهِيمَ إِنَّكَ حَمِيْدٌ مَّجِيْدٌ }

**ຄວາມໝາຍວ່າ:** "ຂ້າພະເຈົ້າຂໍວິງວອນຕໍ່ພຣະອົງອັລລໍຫ໌ ຂໍສົງໂປດປານປະທານຄວາມຈຳເລີນແດ່ທ່ານນະບີມຸຫັມມັດ ຊັລລັລລໍຫຸ ອະລັຍຮິ ວະສັລລັມ ແລະເຄືອພີ່ນ້ອງຂອງທ່ານ ດັ່ງທີ່ພະອົງສົງໂປດປານປະທານຄວາມຈຳເລີນແດ່ທ່ານນະບີອິບຣໍຫີມ ແລະເຄືອພີ່ນ້ອງຂອງທ່ານ ແທ້ຈິງພຣະອົງສົງເປັນຜູ້ໄດ້ຮັບການສັນລະເສີນແລະເປັນຜູ້ສົງກຽດ ແລະຂໍພຣະອົງສົງໂປດປານປະທານຄວາມປະເສີດແດ່ທ່ານນະບີມຸຫັມມັດ ຊັລລັລລໍຫຸ ອະລັຍຮິ ວະສັລລັມ ແລະຄອບຄົວຂອງທ່ານ ດັ່ງທີ່ພຣະອົງໄດ້ປະທານຄວາມປະເສີດແດ່ທ່ານນະບີອິບຣໍຫີມ ແລະຄອບຄົວຂອງທ່ານ ແທ້ຈິງພຣະອົງສົງເປັນຜູ້ໄດ້ຮັບການສັນລະເສີນແລະເປັນຜູ້ສົງກຽດ"

ແລະໃຫ້ກ່າວຂໍການຄຸ້ມຄອງຈາກອັລລໍຫ໌ ຈາກປະການ 4 ສິ່ງດັ່ງນີ້:

{{ اللَّهُمَّ إِنِّيْ أَعُوْذُ بِكَ مِنْ عَذَابِ جَهَنَّمَ، وَمِنْ عَذَابِ الْقَبْرِ، وَمِنْ فِتْنَةِ الْمَحْيَا وَالْمَمَاتِ، وَمِنْ فِتْنَةِ الْمَسِيْحِ الدَّجَالِ }}

**ຄວາມໝາຍວ່າ:** "ຂ້າພະເຈົ້າຂໍວິງວອນຈາກພະອົງອັລລໍຫ໌ ຂໍສິງໂປດໃຫ້ຂ້າພະເຈົ້າຫ່າງໄກຈາກການທໍລະມານໃນນະຣົກ ແລະສິງໂປດໃຫ້ຂ້າພະເຈົ້າຫ່າງໄກຈາກການທໍລະມານໃນລຸ່ມຝັງສົບ(ປ່າແຫ່ວ) ແລະສິງໂປດໃຫ້ຂ້າພະເຈົ້າຫ່າງໄກຈາກຄວາມໄຫຍະນະໃນການໃຊ້ຊີວິດປັດຈຸບັນແລະຊີວິດຫຼັງຄວາມຕາຍ ແລະສິງໂປດໃຫ້ຂ້າພະເຈົ້າຫ່າງໄກຈາກຄວາມໄຫຍະນະຂອງດັດຈາລ"

ໃຫ້ກ່າວຕາມດ້ວຍດຸອາຂໍຄວາມໂຊກດີ ທັ້ງໂລກນີ້ແລະໂລກໜ້າຕາມຄວາມປະສົງແລະຕ້ອງການ

ຫາກດຸອາ(ຂໍພອນ) ໃຫ້ແກ່ພໍ່ແມ່ ຫຼື ຜູ້ອື່ນທີ່ເປັນມຸສລິມອະນຸຍາດໃຫ້ເຮັດໄດ້ທັ້ງໃນລະໝາດຟັຣດູ(ພາກບັງຄັບ)ແລະລະໝາດສຸນັດ(ຕາມໃຈສະມັກ) ເນື່ອງດ້ວຍຄຳກ່າວຂອງທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ ຈາກຫະດີຊຂອງມັສອູດ ຣໍດິຍັລລໍຫ ອັນຮຸ ເມື່ອຄັ້ງທີ່ຖືກສອນໃນເລື່ອງການນັ່ງຕະຊະຫຸດແລະທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ ໃຫ້ລາວເລືອກກ່າວດຸອາຕາມໃຈມັກ

ມີລາຍງານຫະດີຊບົດອື່ນ ກ່າວຄື ໃຫ້ເລືອກຂໍພອນໃນສິ່ງທີ່ຕ້ອງການ ສິ່ງທີ່ເປັນປະໂຫຍດຕໍ່ບ່າວຂອງພະອົງທັ້ງໂລກນີ້ແລະໂລກໜ້າ

ເມື່ອເສັດຈາກການດຸອາ ໃຫ້ຫັນໜ້າໄປທາງຂວາພ້ອມກັບກ່າວສະລາມວ່າ

{{ السَّلاَمُ عَلَيْكُمْ وَرَحْمَةُ اللهِ }}

**ຄວາມໝາຍວ່າ:** "ຂໍຄວາມສັນຕິສຸກ ແລະຄວາມເມດຕາຈົ່ງປະສົງແດ່ທ່ານທັ້ງຫຼາຍ"

ແລະໃຫ້ຫັນໜ້າໄປທາງຊ້າຍພ້ອງກ່າວສະລາມດັ່ງກ່າວເຊັ່ນກັນ

### 14. ກໍລະໜີລະຫມາດສາມຫຼື ສີ່ຣໍກະອັດ

ການລະຫມາດທີ່ມີ 3 ຣໍກະອັດ ເຊັ່ນ ລະຫມາດມັກຣິບ ຫຼືການລະມາດທີ່ມີ 4 ຣໍກະອັດ ເຊັ່ນ ລະຫມາດຊຸຫຣິ ລະຫມາດອັສຣິ ແລະລະຫມາດອິຊາ ໃຫ້ອ່ານຕະຊະຫຸດຄັ້ງທຳອິດຄືກັບທີ່ເຮົາໄດ້ອະທິບາຍແລ້ວຂ້າງຕົ້ນ ພ້ອມກັບຂໍພອນ (ສໍລະວາດ)ໃຫ້ກັບທ່ານນະບີ ຊັລລັລລໍຫຸ ອະລັຍຣິ ວະສັລລັມ

ເມື່ອເສັດສິ້ນແລ້ວໃຫ້ລຸກຂຶ້ນຢືນດ້ວຍການນຳມືທັ້ງສອງຂ້າງຈັບໄປທີ່ຫົວເຂົ່າຂະນະລຸກຂຶ້ນ ແລະຍົກມືທັ້ງສອງຂ້າງໃຫ້ຢູ່ລະດັບຫົວໄລ ຫຼື ຕິ່ງຫູຂະນະຢືນກົງ ພ້ອມກັບການກ່າວຕັກບີຣ **"ອັລລໍຫຸ ອັກບັຣ"**

ຫຼັງຈາກນັ້ນໃຫ້ວາງມືທັ້ງສອງເຖິງໜ້າອົກ ດັ່ງທີ່ໄດ້ສອນແລ້ວຕອນຕົ້ນ ແລະອ່ານສູເຣາະຫ ອັລ-ຟາຕິຫະຫ ຢ່າງດຽວໃນຣໍກະອັດທີ່ສາມແລະ ສີ່

ຖ້າອ່ານອາຍະກອື່ນຫຼືສູເຣາະຫອື່ນເພີ່ມຫຼັງຈາກ ອັລ-ຟາຕິຫະຫ໌ໃນຣໍກະອັດທີ່ສາມ ແລະ ສີ່ ໃນການລະຫມາດຊຸຫຣິ ເປັນບາງຄັ້ງບາງເທື່ອ ກໍ່ເປັນທີ່ອະນຸຍາດໃຫ້ເຮັດໄດ້ ເນື່ອງຈາກມີສາຍລາຍງານບົ່ງບອກກຽ່ວກັບເລື່ອງດັ່ງກ່າວຈາກຫະດິຊຂອງອາບູ ສະອີດ ຣໍດີຍັລລໍຫ ອັນຮຸ

ໃຫ້ນັ່ງອ່ານຕະຊະຫຸດສຸດທ້າຍ(ຄັ້ງທີ່ສອງ)ໃນຣໍກະອັດທີ່ສາມສຳລັບລະຫມາດມັກຣິບ ແລະໃຫ້ນັ່ງອ່ານຕະຊະຫຸດສຸດທ້າຍໃນຣໍກະອັດທີ່ສີ່ ສຳຫຼັບລະຫມາດຊຸຫຣິ ອັສຣິ ແລະອິຊາ ຄືກັບການກ່າວໃນລະຫມາດສອງຣໍກະອັດດັ່ງທີ່ໄດ້ອະທິບາຍແລ້ວຂ້າງຕົ້ນ

ແລະເມື່ອເສັດສິ້ນແລ້ວ ກໍ່ໃຫ້ສະລາມຫັນໄປທາງຂວາກ່ອນແລະຕາມດ້ວຍຫັນໄປຂ້າງຊ້າຍ

### ☪ ສິ່ງທີ່ສຸນັດ(ສິ່ງເສີມ)ໃຫ້ກ່າວຫຼັງລະຫມາດ

- ການຂໍອະໄພອະຍະໂທດຈາກອັລລໍຫ໌ 3 ຄັ້ງ ຄື:

❁ أَسْتَغْفِرُ اللّٰهَ ❁

**ຄວາມໝາຍວ່າ:** "ຂ້າພະເຈົ້າຂໍອະໄພຍະໂທດຈາກພຣະອົງອັລລໍຫ໌"

- ໃຫ້ກ່າວ 3 ຄັ້ງຫຼືຫຼາຍກວ່ານັ້ນ

﴿ لاَ إِلَهَ إِلاَّ اللهُ وَحْدَهُ لاَ شَرِيْكَ لَهُ الْمُلْكُ وَلَهُ الْحَمْدُ وَهُوَ عَلَى كُلِّ شَيْءٍ قَدِيْرٌ ﴾

**ຄວາມໝາຍ:** "ບໍ່ມີພະເຈົ້າອື່ນໃດນອກຈາກອັລລໍຫ໌ ພຽງພຣະອົງດຽວ ບໍ່ມີພາຄີໃດໆ ຄວບຄູ່ກັບພຣະອົງ ອຳນາດເປັນຂອງພຣະອົງ ພຣະອົງມີເດຊານຸພາບເໜືອທຸກສິ່ງ"

﴿ اللَّهُمَّ أَنْتَ السَّلاَمُ، وَمِنْكَ السَّلاَمُ، تَبَارَكْتَ يَا ذَا الْجَلاَلِ وَالإِكْرَامِ ﴾

**ຄວາມໝາຍວ່າ:** "ຂ້າພະເຈົ້າຂໍວິງວອນຈາກພຣະອົງອັລລໍຫ໌ ພຣະອົງຄື ຄວາມສັນຕິສຸກ ຄວາມສັນຕິທັ້ງຫຼາຍມາຈາກພຣະອົງ ພຣະອົງສົງເປັນຜູ້ທີ່ປະເສີດ ໂອ້ພຣະອົງສົງເປັນຜູ້ຄອບຄອງທັ້ງຄວາມຍິ່ງໃຫຍ່ແລະກຽດຕິຍົດ"

### ☪ ອິມາມຈະກ່າວດຸອານີ້ ກ່ອນທີ່ຈະຫັນໜ້າໄປທາງມະອ໌ມູມ

- ໃຫ້ກ່າວວ່າ:

﴿ لاَ إِلَهَ إِلاَّ اللهُ وَحْدَهُ لاَ شَرِيْكَ لَهُ الْمُلْكُ وَلَهُ الْحَمْدُ وَهُوَ عَلَى كُلِّ شَيْءٍ قَدِيْرٌ، اللَّهُمَّ لاَ مَانِعَ لِمَا أَعْطَيْتَ وَلاَ مُعْطِيَ لِمَا مَنَعْتَ وَلاَ يَنْفَعُ ذَا الْجَدِّ مِنْكَ الْجَدُّ ، لاَحَوْلَ وَلاَ قُوَّةَ إِلاَّ بِاللهِ، لاَ إِلَهَ إِلاَّ اللهُ وَلاَ نَعْبُدُ إِلاَّ إِيَّاهُ، لَهُ النِّعْمَةُ وَلَهُ الْفَضْلُ وَلَهُ الثَّنَاءُ الْحَسَنُ، لاَ إِلَهَ إِلاَّ اللهُ مُخْلِصِيْنَ لَهُ الدِّيْنَ وَلَوْ كَرِهَ الْكَافِرُوْنَ ﴾

**ຄວາມໝາຍ:** "ບໍ່ມີພຣະເຈົ້າອື່ນໃດນອກຈາກອັລລໍຫ໌ ພຽງພຣະອົງດຽວ ບໍ່ມີພາຄີໃດໆ ຄວບຄູ່ກັບພຣະອົງ ອຳນາດເປັນຂອງພຣະອົງ ພຣະອົງມີເດຊານຸພາບເໜືອທຸກສິ່ງ ໂອ້ອັລລໍຫ໌ ພະຜູ້ອະພິບານແຫ່ງເຮົາ ບໍ່ມີຜູ້ໃດຫ້າມໄດ້ໃນສິ່ງທີ່ພຣະອົງສົງປະທານ ແລະບໍ່ມີຜູ້ໄດ້ໃຫ້ໄດ້ໃນສິ່ງທີ່ພຣະອົງສົງຫ້າມໄວ້ ແລະຄວາມລ່ຳລວຍອຳນາດຂອງຜູ້ໃດບໍ່ອາດອຳນວຍຜົນແກ່ຜູ້ຄົນນັ້ນຕໍ່ໜ້າພຣະອົງ (ຫຼືຈາກການລົງໂທດຂອງພະອົງ)ໄດ້ ບໍ່ມີຄວາມສາມາດແລະພະລັງອຳນາດໃດໆ ນອກຈາກພະອົງອັລລໍຫ໌ ແລະບໍ່ມີການເຄົາລົບພັກດີອື່ນໃດນອກຈາກພຣະອົງ ພຣະອົງສິດທິໃນການປະທານຄວາມສິດທິໃນຄວາມປະເສີດ ສົງສິດທິໃນການສັນລະເສີນທີ່ດີງາມ ບໍ່ມີພຣະເຈົ້າອື່ນໃດນອກຈາພຣະອົງ ດ້ວຍຄວາມບໍລິສຸດໃນໃຈ ການເສີດຊູສາສະໜາຂອງພຣະອົງ ເຖິງວ່າບັນດາຄົນກາຟີຣ(ຜູ້ປະຕິເສດ)ຈະກຽດຊັ່ງບໍ່ມັກເຮົາກໍ່ຕາມ

### ☪ ການກ່າວຕັສບີຫ໌ຫຼັງລະຫມາດ

- ກ່າວຕັສບີຫ 33 ຄັ້ງ

۞ سُبْحَانَ اللّٰهِ ۞

**ຄວາມໝາຍວ່າ:** "ພະອົງອັລລໍຫ໌ສິງບໍລິສຸດທີ່ສຸດ"

- ກ່າວຕະຫມີດ 33 ຄັ້ງ

۞ الحَمْدُ لِلّٰهِ ۞

**ຄວາມໝາຍວ່າ:** "ການສັນລະເສີນທັ້ງມວນເປັນສິດທິຂອງພະອົງອັລລໍຫ໌"

- ກ່າວຕັກບີຣ 33 ຄັ້ງ

۞ اللّٰهُ أَكْبَرُ ۞

**ຄວາມໝາຍວ່າ:** "ພຣະອົງອັລລໍຫ໌ສິງຍິ່ງໃຫຍ່"

- ອ່ານອາຍະຫ ອັລ-ກຸຣສີ

﴿ اللّٰهُ لَآ اِلٰهَ اِلَّا هُوَۚ اَلْحَيُّ الْقَيُّوْمُ ۚ لَاتَأْخُذُهُ سِنَةٌ وَّلَانَوْمٌۗ لَهُ مَافِى السَّمٰوٰتِ وَمَا فِى الْاَرْضِۗ
مَنْ ذَا الَّذِيْ يَشْفَعُ عِنْدَهٗٓ اِلَّا بِاِذْنِهٖۗ يَعْلَمُ مَا بَيْنَ اَيْدِيْهِمْ وَمَا خَلْفَهُمْۚ وَلَا يُحِيْطُوْنَ بِشَيْءٍ مِّنْ
عِلْمِهٖٓ اِلَّا بِمَا شَاۤءَۚ وَسِعَ كُرْسِيُّهُ السَّمٰوٰتِ وَالْاَرْضَۚ وَلَايَـُٔوْدُهٗ حِفْظُهُمَاۚ وَهُوَالْعَلِيُّ الْعَظِيْمُ ﴾

**ຄວາມໝາຍວ່າ:** "ບໍ່ມີຜູ້ທີ່ຖືກເຄົາລົບສັກກາລະໃດໆ ທີ່ແທ້ຈິງນອກຈາກພຣະອົງອັລລໍຫ໌ອົງດຽວເທົ່ານັ້ນ ຜູ້ສິງມີຊີວິດຕະຫຼອດການ ຜູ້ສິງບໍລິຫານກິດການທັ້ງປວງ ພຣະອົງບໍ່ສິງເງົ່ານອນແລະບໍ່ສິງນອນຫຼັບ ສິ່ງທີ່ຢູ່ໃນຊັ້ນຟາກຟ້າແລະແຜ່ນດິນທັ້ງຫຼາຍເປັນສິດທິຂອງພຣະອົງ ຜູ້ໃດເດ່ທີ່ຂໍຄວາມຊ່ວຍເຫຼືອໃຫ້ແກ່ຜູ້ອື່ນໄດ້ ນອກຈາກການອະນຸມັດຈາກພຣະອົງເທົ່ານັ້ນ ພຣະອົງສິງຮອບຮູ້ສິ່ງທີ່ເກີດຂຶ້ນກ່ອນພວກເຂົາແລະທີ່ເກີດຂຶ້ນຫຼັງພວກເຂົາ ພວກເຂົາຈະບໍ່ໄດ້ຮັບຄວາມຮູ້ສິ່ງໃດໆຈາກຄວາມຮູ້ຂອງພຣະອົງນອກຈາກສິ່ງທີ່ພຣະອົງສິງປະສົງທີ່ຈະໃຫ້ຮູ້ເທົ່ານັ້ນ ກຸຣສີ (ພຣະທີ່ນັ່ງ)ຂອງພຣະອົງນັ້ນກວ້າງຂວາງທົ່ວຊັ້ນຟາກຟ້າທັ້ງຫຼາຍແລະແຜ່ນດິນ ແລະ

ການຮັກສາທັ້ງສອງກໍ່ບໍ່ເປັນການລຳບາກໃດໆແກ່ພຣະອົງ ແລະພຣະອົງນັ້ນຄື ຜູ້ສູງສົ່ງ ຜູ້ສົງຍິ່ງໃຫຍ່

ອ່ານສູເຣາະຫ໌ ອັລ-ອິກລາສ, ສູເຣາະຫ໌ ອັລ-ຟະລັກ, ແລະ ສູເຣາະຫ໌ ອັລ-ນາສ ສຸນັດໃຫ້ອ່ານສູເຣາະຫ໌ທັ້ງສາມ 3 ຄັ້ງ ຫຼັງຈາກລະຫມາດຊຸບຮິ ແລະຫຼັງລະຫມາດມັກຣິບ ເນື່ອງຈາກມີຫຼາຍຫະດີຊທີ່ລາຍງານເລື່ອງດັ່ງກ່າວຈາກທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ

❖ ສູເຣາະຫ໌ ອັລ-ອິກລາສ

بِسْمِ اللهِ الرَّحْمٰنِ الرَّحِيْمِ

﴿ قُلْ هُوَ اللهُ اَحَدٌ ۝ اللهُ الصَّمَدُ ۝ لَمْ يَلِدْ وَلَمْ يُوْلَدْ ۝ وَلَمْ يَكُنْ لَّهُ كُفُوًا اَحَدٌ ۝ ﴾

**ຄວາມໝາຍວ່າ:** "1. ຈົ່ງກ່າວ(ມຸຫັມມັດ) ພຣະອົງຄືອັລລໍຫ໌ຜູ້ສົງເອກະ 2. ພຣະອົງອັລລໍຫ໌ນັ້ນເປັນທີ່ພຶ່ງ 3. ພຣະອົງສົງບໍ່ປະສູດ(ບໍ່ເກີດ)ແລະບໍ່ຖືກປະສູດ(ບໍ່ຖືກເກີດ) 4.ແລະບໍ່ມີຜູ້ໃດສະເໝີດັ່ງພຣະອົງ"

❖ ສູເຣາະຫ໌ ອັລ-ຟະລັກ

بِسْمِ اللهِ الرَّحْمٰنِ الرَّحِيْمِ

﴿ قُلْ اَعُوْذُ بِرَبِّ الْفَلَقِ ۝ مِنْ شَرِّ مَا خَلَقَ ۝ وَمِنْ شَرِّ غَاسِقٍ اِذَا وَقَبَ ۝ وَمِنْ شَرِّ النَّفّٰثٰتِ فِي الْعُقَدِ ۝ وَمِنْ شَرِّ حَاسِدٍ اِذَا حَسَدَ ۝ ﴾

**ຄວາມໝາຍວ່າ:** "1. ຈົ່ງກ່າວ(ມຸຫັມມັດ) ຂ້ອຍຂໍຄວາມຄຸ້ມຄອງຕໍ່ພຣະເຈົ້າແຫ່ງຮຸ່ງອະລຸນ 2. ໃຫ້ຮອດພົ້ນຈາກຄວາມຊົ່ວຮ້າຍທີ່ພຣະອົງໄດ້ບັນດານຂຶ້ນ 3. ແລະຈາກຄວາມຊົ່ວຮ້າຍແຫ່ງຄວາມມືດໃນເວລາຢາມດຶກເມື່ອມັນແຜ່ຄຸມ 4. ແລະຈາກຄວາມຊົ່ວຮ້າຍຂອງບັນດາຜູ້ເສກເປົ່າໃນປົມເງື່ອນ 5.ແລະຈາກຄວາມຊົ່ວຮ້າຍຂອງຜູ້ທີ່ອິດຊາເມື່ອລາວອິດຊາ"

❖ ສູເຣາະຫ໌ ອັລ-ນາສ

۞ بِسْمِ اللهِ الرَّحْمٰنِ الرَّحِيْمِ ۞

﴿ قُلْ اَعُوْذُ بِربِّ النَّاسِ ۝ مَلِكِ النَّاسِ ۝ اِلٰهِ النَّاسِ ۝ مِنْ شَرِّ الْوَسْوَاسِ الْخَنَّاسِ ۝ اَلَّذِيْ يُوَسْوِسُ فِيْ صُدُوْرِ النَّاسِ ۝ مِنَ الْجِنَّةِ وَالنَّاسِ ﴾

**ຄວາມໝາຍວ່າ:** “1. ຈົ່ງກ່າວ(ມຸຫັມມັດ) ຂ້ອຍຂໍຄວາມຄຸ້ມຄອງຕໍ່ພຣະຜູ້ອະພິບານແຫ່ງມະນຸດຊາດ 2. ເຈົ້າຊີວິດແຫ່ງມະນຸດຊາດ 3.ພຣະເຈົ້າແຫ່ງມະນຸດຊາດ 4. ໃຫ້ພົ້ນຈາກຄວາມຊົ່ວຮ້າຍຂອງຜູ້ກະຊິບກະຊາບ(ນິນທາຫລອກຫຼວງ)ທີ່ຂີ້ຕົວະ 5. ທີ່ກະຊິບກະຊາບໃນຫົວອົກຂອງມະນຸດ 6. ຈາກພວກຈິນ(ຜີ) ແລະມະນຸດ”

### ☪ ລະຫມາດສຸນັດ ອັຣ-ຣໍວາຕິບ

ໄດ້ຖືກບັນຍັດແກ່ມຸສລິມທຸດຄົນໃຫ້ລະຫມາດສຸນັດກ່ອນ ລະຫມາດຊຸຫຣີ 4 ຣໍກະອັດ (ລະຫມາດຄັ້ງລະ 2 ຣໍກະອັດ) ຫຼັງຊຸຫຣີ 2 ຣໍກະອັດ, ລະຫມາດສຸນັດຫຼັງມັກຣິບ 2 ຣໍກະອັດ, ລະຫມາດສຸນັດຫຼັງອິຊາ 2 ຣໍກະອັດ, ແລະລະຫມາດສຸນັດກ່ອນຊູບຮີ 2 ຣໍກະອັດ, ຣວມທັ້ງໝົດເປັນ 12 ຣໍກະອັດ

ການລະຫມາດສຸນັດ 12 ຣໍກະອັດດັ່ງກ່າວເອີ້ນວ່າ **ອັຣ-ຣໍວາຕິບ** ເຊິ່ງທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ ໄດ້ຮັກສາປະຕິບັດການລະຫມາດສຸນັດດັ່ງກ່າວໃນຍາມທີ່ອະໄສຢູ່ພູມລຳເນົາ ແຕ່ເມື່ອທ່ານເດີນທາງ ທ່ານກໍ່ຈະລະຖິ້ມການລະຫມາດສຸນັດດັ່ງກ່າວ ນອກຈາກວ່າລະຫມາດສຸນັດກ່ອນຊຸບຮີແລະລະຫມາດສຸນັດວິຕິຣ ເຊິ່ງເປັນສິ່ງທີ່ທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ ຈະປະຕິບັດມັນເປັນຕະຫຼອດ ທັ້ງຍາມທີ່ອະໄສຢູ່ພູມລຳເນົາແລະຍາມເດີນທາງ

ການລະຫມາດສຸນັດ ອັຣ-ຣໍວາຕິບທີ່ບ້ານຈະເປັນສິ່ງທີ່ດີກວ່າ ແຕ່ຖ້າລະຫມາດຢູ່ມັສຍິດກໍ່ສາມາດເຮັດໄດ້ ເພາະຈາກຄຳສອນຂອງທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ ກ່າວໄວ້ວ່າ:

{{ أفضل صلاة المرء في بيته لا المكتوبة }}

**ຄວາມໝາຍວ່າ:** "ການລະຫມາດທີ່ດີທີ່ສຸດຂອງບຸກຄົນໜຶ່ງນັ້ນ ຄືປະຕິບັດລະຫມາດຢູ່ທີ່ບ້ານ ນອກຈາກວ່າການລະຫມາດຟັຣດູ(ພາກບັງຄັບ)ໃຫ້ລະຫມາດທີ່ມັສຍິດ"

ການຮັກສາລະຫມາດສຸນັດ ອັຣ-ຣໍວາຕິບ 12 ຣໍກະອັດໃຫ້ໄດ້ຕະຫຼອດໄປນັ້ນ ເປັນສາເຫດໜຶ່ງເຮັດໃຫ້ໄດ້ເຂົ້າສວນສະຫວັນ ເພາະຈາກຄຳກ່າວຂອງທ່ານນະບີ ຊັລລັລລໍຫູ ອະລັຍຮິ ວະສັລລັມ ວ່າ:

{{ من صلى اثنتي عشرة ركعة في يومه وليلته تطوعا الله له بيتا في الجنة }}

**ຄວາມໝາຍວ່າ:** " ຜູ້ໃດລະຫມາດສຸນັດ 12 ຣໍກະອັດ ໃນຍາມສວຍແລະຍາມຄ່ຳຄືນຂອງລາວດ້ວຍຄວາມສະມັກໃຈ ພຣະອົງຈະສ້າງບ້ານໃຫ້ລາວໃນສວນສະຫວັນ"

ຖ້າຫາກລະຫມາດສຸນັດກ່ອນລະຫມາດອັສຣິ 4 ຣໍກະອັດ ກ່ອນລະຫມາດມັກຣິບ 2 ຣໍກະອັດ ແລະກ່ອນລະຫມາດອິຊາ 2 ຣໍກະອັດ ຍ່ອມເປັນສິ່ງທີ່ດີງາມ ເພາະສິ່ງດັ່ງກ່າວເປັນສິ່ງທີ່ຖືກຕ້ອງເຊິ່ງມີລາຍງານຈາກທ່ານນະບີ ຊັລລັລລໍຫູ ອະລັຍຮິ ວະສັລລັມ.........

*ຂໍອັລລໍຫປະທານເຕົາຟີກ (ທາງນຳ) ຂໍຄວາມຈຳເລີນແລະຄວາມສັນຕິສຸກຈົ່ງປະສົບແດ່ທ່ານນະບີຂອງເຮົາ ຊັລລັລລໍຫູ ອະລັຍຮິ ວະສັລລັມ ຄືທ່ານນະບີມູຫັມມັດ ລູກຂອງອັບດຸລລໍຫ໌ ຕະຫຼອດຮອດຄົນໃນຄອບຄົວພີ່ນ້ອງຂອງທ່ານ ແລະສະຫາຍຂອງທ່ານທັ້ງຫຼາຍ ແລະຜູ້ທີ່ຮຽນຮູ້ສຶກສາປະຕິບັດຄວາມງາມຄວາມດີຕາມແນວທາງທ່ານຈົນຮອດວັນສິ້ນໂລກ ອາມີນ*